Wake up - the Lao Coffee Game

**ປຸກຄວາມຕື່ນເຕັ້ນຂອງທ່ານ ເມື່ອຫຼິ້ນເກມກາເຟລາວ** - ມິຕິຕ່າງໆ ຂອງຂະແໜງກາເຟລາວ

# ເນື້ອໃນຕົວຊີ້ບອກ ແລະ ຜົນປະໂຫຍດຕ່າງໆ



## ຄຸນນະພາບຂອງສິ່ງແວດລ້ອມ

ສິ່ງແວດລ້ອມໃຫ້ຜົນປະໂຫຍດແກ່ມວນມະນຸດຢ່າງນັບບໍ່ຖ້ວນ. ຕົ້ນໄມ້ເຮັດໜ້າທີ່ສັງເຄາະແສງ, ດູດເອົາອາຍກາກໂບນິກ($CO_2$) ອອກຈາກບັນຍາກາດ ແລະ ຜະລິດອົກຊີເຈນໃຫ້ພວກເຮົາຫາຍໃຈ. ແມງໄມ້ເຮັດໜ້າທີ່ປະສົມເກສອນຊຶ່ງເປັນສິ່ງສຳຄັນໃນການປູກພືດ, ການພັດທະນາກະສິກຳ ແລະ ຜະລິດສະບຽງອາຫານ. ນອກຈາກສິ່ງແວດລ້ອມມີປະໂຫຍດແກ່ມະນຸດເຮົາຢ່າງມະຫາສານແລ້ວ, ທຳມະມາຊາດຍັງສ້າງໃຫ້ພືດ ແລະ ສັດມີຄວາມສຳພັນກັນ. ດັ່ງນັ້ນ, ລະບົບນິເວດຈຶ່ງມີລັກສະນະມີຄວາມສຳພັນກັນຢ່າງເປັນລະບົບໃນສິ່ງແວດດລ້ອມທີ່ຢູ່ອ້ອມຕົວເຮົາ,ຊຶ່ງມີຜົນມາຈາກວິວັດທະນາການຫຼາຍລ້ານປີ. ເພາະສະນັ້ນ, ຖ້າລະບົບໜຶ່ງຖືກທຳລາຍກໍຈະມີຜົນກະທົບຕໍ່ລະບົບອື່ນ ແລະ ບາງເທື່ອກໍເຮັດໃຫ້ລະບົບນິເວດຂາດຄວາມສົມດູນ. ໃນເກມກາເຟລາວ, “ຄຸນນະພາບຂອງສິ່ງແວດລ້ອມ" ໝາຍເຖິງ ຄວາມອາດສາມາດໃນການສະໜອງສິ່ງທີ່ມີຄຸນປະໂຫຍດສູງສຸດໃຫ້ແກ່ຄົນຫຼູ້ນຕໍ່ຫຼູ້ນ, ໂດຍປາສະຈາກການຈັດລະບຽບໃນຊີວິດຂອງມະນຸດເທົ່າທີ່ຈະເປັນໄປໄດ້. ດັ່ງນັ້ນ, ມັນຈະໄດ້ຮັບຜົນກະທົບທາງລົບຈາກສິ່ງເສດເຫຼືອ ແລະ ມົນລະພິດທີ່ມະນຸດສ້າງຂຶ້ນຊຶ່ງເຮັດໃຫ້ເຊື່ອມຄຸນນະພາບຂອງອາກາດທີ່ພວກເຮົາຫາຍໃຈ ແລະ ນ້ຳທີ່ເຮົາດື່ມ ພ້ອມກັບເຮັດໃຫ້ມີສານຕົກຄ້າງຈາກພາສຕິກໃນອາຫານທະເລ ຫຼື ສານຕົກຄ້າງຂອງຢາປາບສັດຕູພືດໃນຜົນຜະລິດທາງກະສິກຳ. ສິ່ງແວດລ້ອມຍັງໃຫ້ປະໂຫຍດທາງແຫຼ່ງຊັບພະຍາກອນທຳມະຊາດເຊັ່ນ: ນ້ຳມັນ ຫຼື ແກັສທຳມະຊາດ ທີ່ເປັນຊັບພະຍາກອນທາງດິນທີ່ຫາຍາກ ແລະ ມີບົດບາດສຳຄັນຂຶ້ນເລື້ອຍໆໃນຂະແໜງເສດຖະກິດທີ່ທັນສະໄໝ. ສິ່ງແວດລ້ອມສະໜອງສິ່ງທີ່ສຳຄັນໃນການຜະລິດພະລັງງານ, ພະລັງງານແສງຕາເວັນ ແລະ ພະລັງງານຈາກລົມຊຶ່ງເປັນພະລັງງານທີ່ປ່ຽນແທນຈາກການໃຊ້ຖ່ານຫີນໃນສະໄໝກ່ອນ. ຊັບພະຍາກອນເຫຼົ່ານີ້ໄດ້ພັດທະນາ ຕາມແຕ່ລະໄລຍະເວລາການປ່ຽນແປງທາງທໍລະນີສາດ ແລະ ການສະຫນອງຂອງຊັບພະຍາກອນດັ່ງກ່າວແມ່ນມີຈຳກັດ. ດັ່ງນັ້ນ, ການເສື່ອມສະພາບຂອງຊັບພະຍາກອນທຳມະຊາດນັບມື້ນັບລຸດລົງ. ການຂາດຄວາມສົມດູນ ໃນລະບົບນິເວດທີ່ໄດ້ກ່າວມາຂ້າງເທິງ, ການສູນເສຍຊີວະນາໆພັນ ນຳໄປສູ່ການເຊື່ອມຄຸນນະພາບຂອງສິ່ງແວດລ້ອມ.



## ສະພາບຊີວິດການເປັນຢູ່ຂອງຜູ້ຜະລິດກາເຟ

### (ລວມທັງຊາວສວນກາເຟ, ແຮງງານຮັບຈ້າງ, ແລະ ພໍ່ຄ້າຂັ້ນທ້ອງຖິ່ນ)

ຊີວິດການເປັນຢູ່ສະແດງໃຫ້ເຫັນຄວາມສາມາດຂອງບຸກຄົນບໍ່ພຽງແຕ່ເພື່ອຄວາມຢູ່ລອດ, ຍັງລວມເຖິງຄວາມສາມາດຕອບສະໜອງຄວາມຕ້ອງການພື້ນຖານຂອງມະນຸດ ເຊັ່ນ: ດ້ານຮ່າງກາຍ, ສຸຂາພິບານ, ສັງຄົມ, ຈິດໃຈ. ສິ່ງທີ່ແນ່ນອນ ແມ່ນ ລາຍຮັບມີບົດບາດເປັນຕົວກຳນົດໃນທຸກດ້ານ ຂອງການດຳລົງຊີວິດລວມທັງປັດໃຈອື່ນໆນຳອີກ. ຕົວຢ່າງ, ເຖິງແມ່ນວ່າລາຍໄດ້ຂອງຄົນຜູ້ໜຶ່ງຈະສູງກວ່າຄົນອື່ນ,ແຕ່ຄວາມເທົ່າທຽມກັນໃນສັງຄົມໜ້ອຍກໍອາດ ເຮັດໃຫ້ຮູ້ສຶກບໍ່ປອດໄພໃນສັງຄົມ, ເນື່ອງຈາກ ບໍ່ມີຄວາມສະຫງົບ ແລະ ຄວາມຮຸນແຮງທີ່ເກີດຂຶ້ນໃນສັງຄົມມີແນວໂນ້ມກາຍເປັນສັງຄົມທີ່ບໍ່ມີຄວາມຍຸດຕິທຳ. ປັດໄຈອື່ນໆທີ່ຕ້ອງພິຈາລະນາປະກອບມີທາງເລືອກ, ໂອກາດ, ແລະ ເວົ້າໂດຍທົ່ວໄປ, ຄວາມຮູ້ສຶກຂອງການມີຊີວິດຕົນເປັນທີ່ເພິ່ງຂອງຕົນ ເປັນສິ່ງທີ່ດີກວ່າ ຊີວິດຂຶ້ນກັບຄົນອື່ນ. ປັດໄຈໜຶ່ງອາດລວມເຖິງການມີຄວາມປອດໄພຈາກບ່ອນເຮັດວຽກທີ່ເປັນບ່ອນຫາລາຍໄດ້ລ້ຽງຊີບທີ່ໜ້າເຊື່ອຖື ແລະ ມີຄວາມຍຸດຕິທຳ ແລະ ໝັ້ນຄົງ, ຊຶ່ງອີງການປະກັນສັງຄົມມີບົດບາດສຳຄັນໃນການຄຸ້ມຄອງຂະແໜງດັ່ງກ່າວທີ່ມີຄວາມສາມາດຄຸ້ມຄອງການເຈັບປ່ວຍຫຼືການບາດເຈັບໄດ້. ເງື່ອນໄຂການເຮັດວຽກຍັງເປັນອີກປັດໄຈທີ່ຕັດສິນໃນການປະເມີນຜົນການດຳລົງຊີວິດຂອງຜູ້ຜະລິດ ໂດຍສະເພາະແມ່ນການມີໂອກາດໃນການຈ້າງງານ, ເປັນຕົວຊີ້ວັດສຳຄັນຂອງການຫາລາຍໄດ້. ນອກຈາກປັດໄຈເຫຼົ່ານີ້ທີ່ເປັນຕົວກຳນົດສຳຄັນ, ແຕ່ຍັງມີປັດໃຈອື່ນໆ ໂດຍສະເພາະແມ່ນ ການເຂົ້າເຖິງຊັບພະຍາກອນທາງທີ່ດິນ ແລະ ການເງິນໂດຍຜ່ານເງິນກູ້ຢືມແມ່ນເປັນສ່ວນໜຶ່ງທີ່ສຳຄັນທີ່ເຮັດໃຫ້ມີລາຍຮັບຄົງທີ່. ນອກຈາກນັ້ນ, ຊັບສິນພື້ນຖານຂອງການດຳລົງຊີວິດອື່ນໆທີ່ເປັນປັດໄຈໃນການຍັ້ງຢືນການມີສະຫວັດທິພາບທີ່ດີ ແມ່ນ ການຄໍ້າປະກັນສະບຽງອາຫານ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ລວມທັງ ການປັບປຸງເງື່ອນໄຂຕ່າງໆທີ່ເຮັດໃຫ້ຄົນຜູ້ດ້ອຍໂອກາດໃນສັງຄົມ ມີໂອກາດມີຄວາມສາມາດຄືກັບຄົນອື່ນໆໃນສັງຄົມ ຫຼືຄວາມ ເປັນໄປໄດ້ໃນການພັດທະນາການສຶກສາຂອງຄົນໃນສັງຄົມ.



## <u>ແຮງດຶງດູດທາງດ້ານເສດຖະກິດໃນຂະແໜງກາເຟລາວ</u>

ແຮງດຶງດູດທາງດ້ານເສດຖະກິດໃນຂະແໜງກາເຟລາວ ອະທິບາຍເຖິງອຳນາດໃນການດຶງດູດ ເອົາຜູ້ປະກອບການໃນພາກສ່ວນຕ່າງໆ ທີ່ມີສ່ວນຮ່ວມໃນຕ່ອງໂສ້ມູນຄ່າໃນຂະແໜງກາເຟລາວ ເຊັ່ນ: ນັກລົງທຶນ, ພໍ່ຄ້າ, ແຮງງານຮັບຈ້າງ, ຜູ້ຜະລິດກາເຟແຕ່ລະພາກສ່ວນ(ຜູ້ປູກ, ຜູ້ຂົ້ວ, ຜູ້ປຸງແຕ່ງຮູບແບບອື່ນໆ), ລັດຖະບານ ແລະ ອື່ນໆ. ຈາກມຸມມອງຂອງນັກລົງທຶນປັດໄຈທີ່ສາມາດດຶງດູດເຂົ້າມາລົງທຶນແມ່ນການລົງທຶນຕ້ອງມີກຳໄລ ແລະ ຄວາມຫມັ້ນຄົງທາງເສດຖະກິດ. ຊຶ່ງຄວາມບໍ່ແນ່ນອນເປັນສິ່ງທີ່ບໍ່ດີໃນການເຮັດທຸລະກິດຢ່າງແທ້ຈິງ. ໂດຍປົກກະຕິ, ໃນເວລາທີ່ຂະແຫນງການໃດຫນຶ່ງມີຜົນກຳໄລສູງຈາກການລົງທຶນນີ້ ຈະເປັນສິ່ງດຶງດູດນັກລົງທຶນໃຫມ່ເຂົ້າມາລົງທຶນເຮັດທຸລະກິດໄດ້ຢ່າງງ່າຍດາຍ. ຖ້າການສະໜອງເພີ່ມເຕີມນີ້ຕອບສະໜອງກັບຄວາມຕ້ອງການຂອງກາເຟລາວຈະເຮັດໃຫ້ຂະແໜງກາເຟຈະເລີນເຕີບໂຕ. ປະລິມານການຜະລິດ, ລາຍຮັບທັງໝົດ, ການສົ່ງອອກ, ວຽກເຮັດງານທຳທັງໝົດນັບມື້ນັບອຸດົມສົມບູນ. ເຖິງຢ່າງໃດກໍ່ຕາມ, ການເຊື່ອມໂຍງລະຫວ່າງກຳໄລແລະການຂະຫຍາຍຕົວຂອງຂະແຫນງກາເຟສ່ວນໃຫຍ່ແມ່ນຂຶ້ນກັບລະດັບຄວາມເຂັ້ມງວດຂອງລະບຽບການຂອງການຕະຫຼາດກາເຟ. ຕົວຢ່າງ: ເຖິງແມ່ນວ່າບໍລິສັດຈະສະແດງວ່າມີຜົນກຳໄລສູງ, ແຕ່ຂະແຫນງກາເຟບໍ່ສາມາດດຶງດູດນັກລົງທຶນ ໄດ້ຖ້າການເຂົ້າມາລົງທຶນມີຄວາມຫຍຸ້ງຍາກ ແລະ ມີອຸປະສັກຫຼາຍຢ່າງ. ສິ່ງເຫຼົ່ານີ້ອາດຈະເປັນຮູບແບບຂອງຂໍ້ຈຳກັດກ່ຽວກັບ ຄວາມສາມາດໃນການໃຊ່ທີ່ດິນເພື່ອການລົງທຶນ, ຂໍ້ຈຳກັດກ່ຽວກັບການໃຊ້ແຫຼ່ງທຶນຈາກຕ່າງປະເທດຫຼືຂໍ້ກຳນົດໃນການສົ່ງອອກ, ລວມທັງປັດໄຈອື່ນໆເຊັ່ນ: ການສໍ້ລາດບັງຫຼວງ ແລະ ຊ່ອງວ່າງກົດຫມາຍທີ່ບໍ່ສາມາດປົກປ້ອງຊັບສິນແລະຜົນກຳໄລຂອງຜູ້ລົງທຶນໃຫ້ໄດ້ຫຼາຍ. ຄຽງຄູ່ກັນນັ້ນ, ອາດຈະກ່າວເຖິງການຂາດເຂີນທາງປັດໄຈການຜະລິດ ເຊັ່ນ: ການຂາດແຮງງານຮັບຈ້າງເຊິ່ງສິ່ງທີ່ສຳຄັນແມ່ນຂຶ້ນກັບກົດລະບຽບກຳນົດເຊັ່ນ: ການສຶກສາແບບບັງຄັບ ແລະ ການໃຊ້ແຮງງານເດັກທີ່ຜິດກົດໝາຍ ຫຼື ຄ່າແຮງງານຂັ້ນຕ່ຳ ແລະ ຄ່າໃຊ້ຈ່າຍການບໍລິການທາງສັງຄົມ.



## ການເຊື່ອມໂຍງກັບພາກພື້ນ

ການເຊື່ອມໂຍງກັບພາກພື້ນອະທິບາຍເຖິງພາກສ່ວນທີ່ກ່ຽວຂ້ອງ ຂອງລາວທີ່ມີຄວາມສຳພັນທາງດ້ານເສດຖະກິດ, ການເມືອງ ແລະ ວັດທະນະທຳກັບພາກສ່ວນອົງການສາກົນ. ການເຊື່ອມໂຍງເຂົ້າກັບປະຊາຄົມໂລກທີ່ແໜ້ນແຟ້ນຂຶ້ນຈະເປັນໂອກາດໄດ້ຮັບການຊ່ວຍເຫຼືອຈາກພາກສ່ວນກ່ຽວຂ້ອງໃນການພັດທະນາຂະແໜງກາເຟຂອງລາວ. ແນ່ນອນ, ຂະແໜງກາເຟແມ່ນຂຶ້ນກັບຄວາມຕ້ອງການຂອງຕ່າງປະເທດເພື່ອການຜະລິດຂອງພວກເຂົາ, ແຕ່ການໄຫຼເຂົ້າຂອງເງິນທຶນຕ່າງປະເທດ ຊຶ່ງລວມທັງບໍລິສັດຕ່າງປະເທດ, ຍັງສາມາດເພີ່ມທະວີການເຊື່ອມໂຍງກັບຂະແໜງກາເຟ ແລະ ເປີດການຊອກຫາຕະຫຼາດໃຫມ່ໃຫ້ຂະແໜງດັ່ງກ່າວ. ການເປີດກວ້າງສາຍພົວພັນເຊື່ອມໂຍງກັບສາກົນບໍ່ພຽງແຕ່ສະແດງອອກໃນພາກເອກະຊົນແຕ່ຍັງລວມທັງພາກລັດອີກ. ສະນັ້ນ, ໃນຍຸກໂລກາພິວັດໄດ້ເຮັດໃຫ້ມີກາລະໂອກາດຫຼາຍຢ່າງ ໃນການຮ່ວມມືກັບສາກົນໃນຮູບແບບສັນຍາການຄ້າທີ່ມີການກຳນົດໂຄຕາການນຳເຂົ້າ ແລະ ສົ່ງອອກ. ສິ່ງເຫຼົ່ານີ້ໄດ້ມີຜົນຕໍ່ກັບສອງຝ່າຍໂດຍສະເພາະຕໍ່ກັບອົງການຈັດຕັ້ງສາກົນຕ່າງໆ ຫຼື ອົງການຊ່ວຍເຫຼືອລ້າຂອງສາກົນ(NGOs) ເຊັ່ນ: ຫ້ອງການຮ່ວມມືເພື່ອການພັດທະນາ ຫຼື ອົງການຮ່ວມມືຫຼາຍຝ່າຍເຊັ່ນ: ອົງການສະຫະປະຊາຊາດ, ອົງການການຄ້າໂລກ ແລະ ອົງການອື່ນໆ. ເຖິງແມ່ນວ່າການເຊື່ອມໂຍງກັບພາກພື້ນຈະມີຜົນດີແຕ່ມັນກໍຍັງມີຄວາມສ່ຽງຫຼາຍ. ໃນໄລຍະສອງສາມທົດສະວັດທີ່ຜ່ານມາ, ປະເທດທີ່ກຳລັງພັດທະນາຫລາຍໄດ້ປະເຊີນກັບວິກິດການທາງດ້ານການເງິນທີ່ເປັນຜົນມາຈາກການຜົນການປ່ຽນແປງຂອງອັດຕາແລກປ່ຽນ. ຄວາມເປັນຈິງແລ້ວ, ສະກຸນເງິນຕ່າງປະເທດມັກຈະການເຫນັງຕີງຫຼາຍຊຶ່ງຜູ້ໃຫ້ກູ້ຢືມເງິນສ່ວນໃຫຍ່ຈະສໜອງການປ່ອຍກູ້ເປັນສະກຸນເງິນຕ່າງປະເທດໂດຍສະເພາະແມ່ນ ເງິນໂດລາສະຫະລັດ. ເຖິງແນວໃດກໍ່ຕາມ, ຖ້າເງິນສະກຸນເງິນໃນປະເທດຕົກຕ່ຳ, ພາລະຫນີ້ສິນຂອງບໍລິສັດພາຍໃນປະເທດຫຍິ່ງເພີ່ມຂຶ້ນຊຶ່ງນຳໄປສູ່ການລົ້ມລະລາຍຢ່າງມະຫາສານ. ກົນໄກອັນໂຫດຮ້າຍນີ້ແມ່ນກ່ຽວຂ້ອງກັບວິກິດການການເງິນຂອງອາຊີປີ 1997. ຊຶ່ງໄລຍະນັ້ນຍັງສະແດງໃຫ້ເຫັນ ດ້ານລົບຂອງການແຊກແຊງຂອງກອງທຶນການເງິນລະຫວ່າງປະເທດ(IMF), ເຊິ່ງມັກເປັນເງື່ອນໄຂກ່ຽວກັບ ການຮັດກຸມທາງດ້ານຄັງເງິນ ແລະ ການໂອນທຸລະກິດຂອງເອກະຊົນ. ໂດຍທົ່ວໄປແລ້ວ, ເມື່ອປະເທດໃດໜຶ່ງອາໄສທຶນຕ່າງປະເທດເພື່ອການພັດທະນາ ປະເທດນັ້ນຈະ ເຂົ້າສູ່ການແຂ່ງຂັນກັບໂຄງການອື່ນໆເພື່ອດຶງດູດນັກລົງທຶນເຂົ້າມາລົງທຶນ. ເພື່ອໃຫ້ໄດ້ຮັບໂອກາດທີ່ດີ ສິ່ງສຳຄັນຕ້ອງສະເໜີເງື່ອນໄຂທີ່ເຫມາະສົມທີ່ສຸດໃຫ້ແກ່ຜູ້ຈັດການຊັບສິນ. ດັ່ງນັ້ນ, ຄ່າໃຊ້ຈ່າຍ ແລະ ຄວາມສ່ຽງມັກຈະເປັນພາລະໃຫ້ກັບຜູ້ເສຍພາສີອາກອນ. ຕົວຢ່າງງ່າຍໆການບໍລິການທາງດ່ວນ ເຊິ່ງຈຳເປັນຕ້ອງລວມເອົາຄ່າຜ່ານທາງດ່ວນ, ເງື່ອນໄຂຂອງກຳໄລຂອງການລົງທຶນຂອງບໍລິສັດແມ່ນກາຍເປັນຊັບສິນພາຍຫຼັງສິ້ນສຸດສັນຍາທີ່ຕົກລົງໄວ້. ຂະບວນການຂັບເຄື່ອນແບບນີ້ຖືກຂະໜານນາມວ່າເປັນ ການລົງປະຊາມະຕິແບບເຫັນດີເຫັນພ້ອມ.



## ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານລາວ

ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານລາວ ອະທິບາຍຂອບເຂດການປະຕິບັດຂອງລັດຖະບານໃນການກຳນົດ ແລະ ຄຸ້ມຄອງຂະແໜງກາເຟລາວ. ຊຶ່ງລວມມີປັດໄຈຕ່າງໆເຊັ່ນ: ການເງິນແຫ່ງລັດ ແລະ ການລະດົມແຫຼ່ງທຶນ, ຄວາມໝັ້ນຄົງທາງດ້ານການເມືອງ ແລະ ຄວາມເຊື່ອໝັ້ນລັດຖະບານ, ເປັນຕົ້ນແມ່ນຄວາມສາມາດໃນການບັນລຸເປົ້າໝາຍ ແລະ ການບັງຄັບໃຊ້ກົດໝາຍຂອງລັດ. ການເພີ່ມທະວີຄວາມອາດສາມາດດ້ານການປົກຄອງຂອງບັນດາສະຖາບັນຂອງລັດແມ່ນຈຸດປະສົງຕົ້ນຕໍຂອງບັນດາສະຖາບັນເອງຊຶ່ງເປັນເຫດຜົນທີ່ຊັດເຈນ, ແຕ່ນັ້ນຍັງໄດ້ມີການຄຸ້ມຄອງຂະແໜງການອື່ນໆອີກ. ຖ້າລັດຖະບານມີຄວາມອາດສາມາດບັງຄັບໃຊ້ກົດຫມາຍປະຊາຊົນໃນສັງຄົມກໍຈະໄດ້ຮັບການປົກປ້ອງທີ່ດີຂຶ້ນ. ນັກລົງທຶນຕ່າງປະເທດມີຄວາມເຊື່ອໝັ້ນວ່າອໍານາດການປົກຄອງຂອງລັດເຮັດໜ້າທີ່ໃນການປົກປ້ອງຊັບສິນຂອງພວກເຂົາ, ບໍ່ວ່າຈະເປັນຊັບສິນທີ່ຈັບຕ້ອງໄດ້ ຫຼື ຊັບສິນທີ່ຈັບຕ້ອງບໍ່ໄດ້ເຊັ່ນ: ສິນທິສັນຍາຕ່າງໆ. ຄວາມອາດສາມາດໃນການຄຸ້ມຄອງຂອງລັດສຳຄັນແມ່ນຂຶ້ນກັບ ການກະຈາຍຂອງການຄຸ້ມຄອງທາງດ້ານການເງິນຂອງລັດໃນຂັ້ນຕ່າງໆແຕ່ຂັ້ນທ້ອງຖິ່ນຢູ່ຂັ້ນເທິງ. ຊຶ່ງມີສອງແຫຼ່ງເຊັ່ນ: ການເກັບພາສີອາກອນ ແລະ ການກູ້ຢືມ. ໃນເມື່ອກ່ອນແມ່ນອີງໃສ່ລະບົບທີ່ມີປະສິດທິພາບ ແລະ ບົນພື້ນຖານເກັບພາສີຂະຫນາດໃຫຍ່. ສິ່ງເຫຼົ່ານີ້ຈະເປັນດີໃນການການພັດທະນາເສດຖະກິດ, ພັດທະນາຊົນນະບົດ, ຫຼຸດຜ່ອນຄວາມທຸກຍາກ. ເພື່ອເປັນການສະແດງໃຫ້ເຫັນວ່າມີການພັດທະນາສິ່ງເຫຼົ່ານີ້, ສຳຄັນແມ່ນ ການພັດທະນາພື້ນຖານໂຄງລ່າງ ເຊັ່ນດຽວກັນກັບມີສະຫວັດດີການສັງຄົມທີ່ດີໃຫ້ແກ່ປະຊາຊົນ, ເຊິ່ງຊ່ວຍເຮັດໃຫ້ຜູ້ມີບົດບາດໃນເສດຖະກິດມີຄວາມຢືດຢຸ່ນຫຼືການປັບຕົວດີ ກວ່າເກົ່າ. ໃນທາງກົງກັນຂ້າມ, ການກູ້ຢືມແມ່ນຂຶ້ນກັບຄວາມໄວ້ວາງໃຈຂອງຜູ້ໃຫ້ກູ້ຢືມເງິນ ໃນຄວາມອາດສາມາດຂອງລັດຖະບານທີ່ໃນການຄໍ້າປະກັນວ່າຜູ້ກູ້ຢືມຈະຊໍາລະຫນີ້ສິນໄດ້ຕາມກຳນົດເວລາ. ການສໍ້ລາດບັງຫຼວງເປັນປັດໄຈສຳຄັນທີ່ທຳລາຍອໍານາດການປົກຄອງຂອງລັດ ໂດຍສະເພາະມີຜົນບໍ່ດີຕໍ່ການສູນເສຍຄັງເງິນແຫ່ງລັດ, ພ້ອມກັບເຮັດໃຫ້ປະຊາຊົນຂາດຄວາມເຊື່ອໝັ້ນໃນກັບການຄຸ້ມຂອງລັດ ແລະ ຈະເຮັດໃຫ້ເກີດອາດຊະຍາກຳ. ເພື່ອໃຫ້ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນ, ລັດຖະບານຍັງສາມາດສະເໜີວິໄສທັດໄລຍະຍາວ ການພັດທະນາເສດຖະກິດສີຂຽວ ແລະ ການຕໍ່ສູ້ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ຊຶ່ງເປັນປັດໄຈທີ່ຈະຊ່ວຍເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ລັດຖະບານໃນການຄຸ້ມຄອງ.